ສັນຕິພາບ ... ວັດທະນະຖາວອນ

0741

ເລກທີ........../ກປ.

ວຽງຈັນ, ວັນທີ 3 JUN 2010

ກະຊວງກະສິກຳ ແລະ ປ່າໄມ້
ກົມປ່າໄມ້
ຂາເຂົ້າ ເລກທີ 1635
ລົງວັນທີ 7/6/10

8/6/10

ຮຽນ: - ທ່ານຫົວໜ້າກົມ, ກອງ, ສະຖາບັນ ອ້ອມຂ້າງກະຊວງ.
- ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການນຳໃຊ້ໃບຢັ້ງຢືນການຮັບຮອງບົດວິພາກເສດຖະກິດ ແລະ ເຕັກນິກ ໃນການສົ່ງເສີມການປູກໄມ້ ອຸດສາຫະກຳ.

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້, ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ, ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ກົດໝາຍ ວ່າດ້ວຍ ການສົ່ງເສີມ ການລົງທຶນ, ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009.
- ອີງຕາມ ບົດບັນທຶກກອງປະຊຸມຂອງພະແນກແຜນການ, ກົມປ່າໄມ້, ສະບັບເລກທີ 024/ຜກ, ລົງວັນທີ 4 ມັງກອນ 2010.

ປະຕິບັດຕາມ ກົດໝາຍ ວ່າດ້ວຍ ປ່າໄມ້, ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007, ມາດຕາ. 74: ການເຊົ່າ ຫຼື ສຳປະທານທີ່ດິນ ປ່າໄມ້ ໄດ້ລະບຸໄວ້ໃນ ຂໍ້ທີ 2. ທັງນີ້ ກໍເພື່ອໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍ ການສົ່ງເສີມ ການລົງທຶນ, ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009 ມາດຕາ. 58: ການສົ່ງເສີມດ້ວຍສິດນຳໃຊ້ທີ່ດິນ.

ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ແຈ້ງໃຫ້ທ່ານຊາບ ດັ່ງນີ້:

1. ມອບໃຫ້ກົມປ່າໄມ້ ເປັນຜູ້ອອກໃບຢັ້ງຢືນການຮັບຮອງບົດວິພາກເສດຖະກິດ-ເຕັກນິກ ໃນການສົ່ງເສີມການປູກໄມ້ ອຸດສາຫະກຳ ໃຫ້ແກ່ບັນດາບໍລິສັດ ແລະ ພາກສ່ວນຕ່າງໆ ທີ່ໄດ້ນຳສະເໜີມາ, ຖ້າໂຄງການ ດັ່ງກ່າວ ມີບັນດາກິດຈະການດ້ານປູກຝັງ, ລ້ຽງສັດ ແລະ ຊົນລະປະທານ ກ່ຽວຂ້ອງນຳ ຕ້ອງໄດ້ສົມທົບກັບຂະແໜງການທີ່ ກ່ຽວຂ້ອງ ເພື່ອປະກອບຄຳເຫັນທາງດ້ານວິຊາການ ຕໍ່ກັບຫົວຂໍ້ຂອງໃບຢັ້ງຢືນຮັບຮອງບົດວິພາກເສດຖະກິດ ແລະ ເຕັກນິກ ຂອງການລົງທຶນດ້ານໃດນັ້ນ ໃຫ້ລະບຸແຈ້ງ, ລະບຸລາຍລະອຽດ ຂອງບໍລິສັດ.
2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ເປັນເຈົ້າການສົມທົບກັບຂະແໜງການ ແລະ ອຳນາດການປົກຄອງເມືອງ ທີ່ກ່ຽວຂ້ອງ ເຮັດໜ້າທີ່ ຕິດຕາມກວດກາການຈັດຕັ້ງປະຕິບັດ ກິດຈະການ ດັ່ງທີ່ໄດ້ລະບຸໄວ້ ໃນບົດວິພາກເສດຖະກິດ-ເຕັກນິກ ຢ່າງຮັດກຸມ.
3. ໃຫ້ທຸກພາກສ່ວນ ກ່ຽວຂ້ອງ ຈົ່ງຮັບຮູ້, ປະສານສົມທົບກັນ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທຸກໆພາກສ່ວນຊາບ ແລະ ປະຕິບັດ ຕາມແຈ້ງການນີ້ດ້ວຍ.

ລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້

ສີຕາເຮັ້ງ ຣາຊະພົນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

***************

ກະຊວງ ກະສິກຳ ແລະ ປ່າໄມ້

ກົມປ່າໄມ້ ເລກທີ.........../ກປມ.

ນະຄອນຫລວງ ວຽງຈັນ, ວັນທີ...................

# ໃບຢັ້ງຢືນ

## ຮັບຮອງບົດວິພາກເສດຖະກິດ - ເຕັກນິກການລົງທຶນ

## ດ້ານສົ່ງເສີມການປູກໄມ້ອຸດສາຫະກຳ

- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບ ເລກທີ 06 / ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ສະບັບ ເລກທີ 07 / ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງ ກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0071/ກປ, ລົງວັນທີ 30 / 01 / 2009 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປ່າໄມ້.
- ອີງຕາມ ບົດບັນທຶກກອງປະຊຸມຄົ້ນຄວ້າ ບົດວິພາກເສດຖະກິດ - ເຕັກ ຂອງບໍລິສັດ...............................

### ກົມປ່າໄມ້ ອອກໃບຢັ້ງຢືນຮັບຮອງເອົາບົດວິພາກເສດຖະກິດ - ເຕັກນິກໃຫ້ແກ່ :

ຊື່ບໍລິສັດ : ..................................

ຊື່ໂຄງການ : ..................................

ຊື່ຜູ້ລົງທຶນ : .................................., ເບີໂທລະສັບຫ້ອງການ................., ມືຖື : ............,Email.......................,

ທີ່ຕັ້ງໂຄງການ : ( ບ້ານ.............................. , ເມືອງ,.............................. ແຂວງ,.................................)

ເນື້ອທີ່ :............( ຂຽນເປັນຕົວເລກ ແລະ ຕົວໜັງສື ( ເຮັກຕາ )

ບົດວິພາກເສດຖະກິດ - ເຕັກນິກ ສະບັບ ເລກທີ ..........................ລົງວັນທີ...........................................

ບໍລິສັດຕ້ອງດຳເນີນທຸລະກິດ ໃຫ້ສອດຄ່ອງຕາມລະບຽບກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ບັນດານິຕິກຳຕ່າງໆ ຢູ່ ສ ປ ປ ລາວ ແລະ ຕ້ອງປະຕິບັດເງື່ອນໄຂຕ່າງໆ ທີ່ໄດ້ລະບຸໄວ້ໃນດ້ານຫລັງ ຂອງໃບຢັ້ງຢືນສະບັບນີ້.

ໃບຢັ້ງຢືນສະບັບນີ້ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ຫົວໜ້າກົມປ່າໄມ້

## ຄຳເຕືອນ

1. ຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດຕໍ່ບັນດາກິດຈະກຳ ແລະ ໜ້າວຽກທີ່ໄດ້ລະບຸໃນບົດວິພາກເສດຖະກິດ - ເຕັກ ນິກ ຢ່າງຖືກຕ້ອງຕາມຂັ້ນຕອນ.
2. ການດຳເນີນທຸລະກິດ ຂອງຕົນຕ້ອງໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ແລະ ລະບຽບການອື່ນໆ ທີ່ລັດວາງອອກຢ່າງເຂັ້ມງວດ ພ້ອມທັງປະຕິບັດຕາມບັນດາເງື່ອນໄຂຕ່າງໆ ທີ່ໄດ້ລະບຸໄວ້ໃນໃບຢັ້ງຢືນສະບັບນີ້.
3. ໃນການດຳເນີນກິດຈະການ ໂຄງການນີ້ຕ້ອງໃຫ້ສອດຄ່ອງກັບແຜນການຄຸ້ມຄອງ ສິ່ງແວດລ້ອມ ແລະ ສັງຄົມ ຢ່າງເຂັ້ມງວດ ເພື່ອຫຼີກລ້ຽງບັນຫາທີ່ອາດຈະເກີດຂຶ້ນຕໍ່ສັງຄົມ ແລະ ສິ່ງແວດລ້ອມ.
4. ໃຫ້ເຮັດບົດລາຍງານຂອງການຈັດຕັ້ງປະຕິບັດໂຄງການທຸກໆ 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ໃຫ້ອົງການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້, ກົມປ່າໄມ້ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນສູນຕ່າງໆ ແລະ ທ້ອງຖິ່ນທີ່ໂຄງການຈັດຕັ້ງປະຕິບັດຢູ່.
5. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ......................................................, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.................................ສົມທົບກັບຂະແໜງການ ແລະ ອຳນາດການປົກຄອງເມືອງ ທີ່ກ່ຽວຂ້ອງເຮັດໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດ ກິດຈະການດັ່ງທີ່ໄດ້ລະບຸໄວ້ໃນບົດວິພາກເສດຖະກິດ - ເຕັກນິກ ຂອງບໍລິສັດດັ່ງກ່າວ.
6. ໃນກໍລະນີ ຫາກຕ້ອງໄດ້ມີການປັບປຸງ ຫລື ປ່ຽນແປງ ບົດວິພາກເສດຖະກິດ - ເຕັກນິກ ຕ້ອງໄດ້ສະເໜີໃຫ້ພາກສ່ວນທີ່ອອກໃບຢັ້ງຢືນຮັບຊາບທຸກຄັ້ງ ເພື່ອຂໍອະນຸຍາດ.
7. ຫ້າມເອົາໃບຢັ້ງຢືນສະບັບນີ້ ໃຫ້ບຸກຄົນອື່ນໃຊ້ແທນ, ປ່ຽນແປງ ຂໍ້ຄວາມ ຫລື ຕົວເລກໃດໜຶ່ງຢ່າງເດັດຂາດ, ຖ້າຜູ້ໃດລະເມີດ ຈະໄດ້ຮັບໂທດຕາມກົດໝາຍ.